# ການສຶກສາປະເມີນການຮຽນ ການສອນແບບມີສ່ວນຮ່ວມ ສຳລັບປີ 2024-2026



## ຂໍ້ມູນລວງເລິກ ຄັ້ງທີ 1 ຈາກກໍລະນີສຶກສາ ດ້ານຄຸນນະພາບ ປີ 2024





# ການສຶກສາປະເມີນການຮຽນການສອນແບບມີສ່ວນຮ່ວມ



ໃນປີ 2024, ກະຊວງສຶກສາທິການ ແລະ ກິລາ ໄດ້ຮ່ວມມືກັບລັດຖະບານອົດສະຕຣາລີ ເພື່ອເລີ່ມຕົ້ນການສຶກສາຄົ້ນຄວ້າທີ່ໜ້າຕື່ນເຕັ້ນໃນການສຳຫຼວດກ່ຽວກັບ ຄວາມຮູ້ສຶກຜູກພັນຂອງນັກຮຽນ ແລະ ການມີສ່ວນຮ່ວມໃນໂຮງຮຽນ ລວມເຖິງຜົນກະທົບຂອງສອງປັດໄຈນີ້ທີ່ມີຕໍ່ຜົນການຮຽນຂອງເຂົາເຈົ້າ. ການສຶກສາຄົ້ນຄວ້ານີ້ເອີ້ນວ່າ: ການສຶກສາປະເມີນການຮຽນການສອນແບບມີສ່ວນຮ່ວມ (ການສຶກສາດ້ານການຮຽນຮ່ວມ).



ການສຶກສາດ້ານການຮຽນຮ່ວມແມ່ນການສຶກສາຄົ້ນຄວ້າໄລຍະຍາວແບບຕໍ່ເນື່ອງ ທີ່ດຳເນີນການເປັນເວລາ 3 ປີ ໃນ 30 ເມືອງເປົ້າໝາຍ ຂອງ 7 ແຂວງເປົ້າໝາຍ. ການສຶກສາດ້ານການຮຽນຮ່ວມນີ້ ປະກອບມີການເກັບກຳລວບລວມຂໍ້ມູນທັງດ້ານຄຸນນະພາບ ແລະ ຂໍ້ມູນດ້ານປະລິມານ. ຈຸດປະສົງຂອງການສຶກສາຄັ້ງນີ້ແມ່ນ ເພື່ອຊອກຫາແນວທາງການສອນທີ່ມີຄຸນນະພາບ ເຊິ່ງຈະນຳໄປສູ່ການມີສ່ວນຮ່ວມຂອງນັກຮຽນທີ່ເພີ່ມຂຶ້ນ ແລະ ມີຜົນການຮຽນທີ່ດີຂຶ້ນສຳລັບນັກຮຽນ. ການສຶກສານີ້ ແມ່ນເນັ້ນໃສ່ປະສົບການຂອງນັກຮຽນຍິງ ແລະ ນັກຮຽນຊາຍທີ່ມີຄວາມດ້ອຍໂອກາດຈາກລະບົບຂອງໂຮງຮຽນ ອັນເນື່ອງມາຈາກພາສາທ້ອງຖິ່ນທີ່ເວົ້າຢູ່ເຮືອນ, ການດຳລົງຊີວິດຢູ່ກັບຄວາມພິການ ຫຼື ການຂາດຮຽນເລື້ອຍໆ.

ການສຶກສາດ້ານການຮຽນຮ່ວມ ແມ່ນນຳໃຊ້ວິທີການວິເຄາະຂໍ້ມູນແບບສະເພາະ ເພື່ອທຳຄວາມເຂົ້າໃຈກ່ຽວກັບປັດໄຈຕ່າງໆທາງດ້ານສັງຄົມ, ຄວາມຮູ້ສຶກ ແລະ ສະພາບແວດລ້ອມ ທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນ, ສິ່ງນີ້ເອີ້ນວ່າ: ຂອບໜ້າວຽກກ່ຽວກັບຄວາມຮູ້ສຶກຜູກພັນ.

ຄວາມຮູ້ສຶກຜູກພັນແມ່ນເປັນສິ່ງສຳຄັນຫຼາຍສຳລັບຄວາມເປັນຢູ່ທີ່ດີ ແລະ ການເຕີບໃຫຍ່ຂອງພວກເຮົາ. ເມື່ອນັກຮຽນມີຄວາມຮູ້ສຶກເຊື່ອມໂຍງກັບຄູ ແລະ ໝູ່ເພື່ອນຮ່ວມຫ້ອງຮຽນ ແລະ ເມື່ອໂຮງຮຽນໃຫ້ຄວາມຮູ້ສຶກຄືກັບຄອບຄົວນັ້ນ, ພວກເຂົາຈະມີຄວາມສຸກຍິ່ງຂຶ້ນ ແລະ ມີຜົນການຮຽນທີ່ດີຂຶ້ນກວ່າເກົ່າ.

ຂອບໜ້າວຽກກ່ຽວກັບຄວາມຮູ້ສຶກຜູກພັນ ໄດ້ຍົກໃຫ້ເຫັນ 3 ປັດໄຈສຳຄັນທີ່ສົ່ງຜົນຕໍ່ຄວາມຮູ້ສຶກຜູກພັນຄື:

**ຄວາມສາມັກຄີ** ບ່ອນທີ່ມີການເຄົາລົບທາງດ້ານຄວາມຫຼາກຫຼາຍ, ແລະ ນັກຮຽນໃຫ້ການສະໜັບສະໜູນ ແລະ ຊຸກຍູ້ເຊິ່ງກັນ ແລະ ກັນ.




**ພື້ນທີ່ອົບອຸ່ນ ແລະ ປອດໄພ** ບ່ອນທີ່ນັກຮຽນຮູ້ສຶກປອດໄພ ແລະ ໄດ້ຮັບການຕ້ອນຮັບທີ່ດີ.

**ການໃຫ້ຄວາມສຳຄັນ** ບ່ອນທີ່ນັກຮຽນແຕ່ລະຄົນມີຄວາມຮູ້ສຶກວ່າ ສິ່ງທີ່ພວກເຂົາສົນໃຈ ແລະ ການປະກອບສ່ວນຂອງພວກເຂົານັ້ນມີຄຸນຄ່າ.

ຂອບໜ້າວຽກກ່ຽວກັບຄວາມຮູ້ສຶກຜູກພັນນີ້ ແມ່ນໄດ້ຖືກນຳໃຊ້ ເພື່ອພັດທະນາເຄື່ອງມືໃນການເກັບກຳຂໍ້ມູນ ແລະ ການວິເຄາະສຳລັບການສຶກສາຄັ້ງນີ້, ພ້ອມທັງ ເປັນການຈັດລະບຽບຂໍ້ມູນເຊິງເລິກທີ່ເປັນຜົນຂອງການຄົ້ນຄວ້ານີ້ ໂດຍອີງຕາມປັດໄຈຄວາມຮູ້ສຶກ **ຜູກພັນ** ທີ່ກ່ຽວຂ້ອງ.

ແຜ່ນພັບນີ້ແມ່ນເປັນການນຳສະເໜີຂໍ້ມູນລວງເລິກຄັ້ງທຳອິດ ທີ່ໄດ້ລວບລວມຈາກການຄົ້ນຄວ້າກໍລະນີສຶກສາດ້ານຄຸນນະພາບທີ່ຈັດຕັ້ງປະຕິບັດໃນເດືອນກຸມພາ ແລະ ເດືອນມີນາ ປີ 2024. ການສຶກສາຄົ້ນຄວ້ານີ້ປະກອບມີ ການສັງເກດການ ແລະ ການສຳພາດນັກຮຽນ, ຜູ້ປົກຄອງ, ຄູສອນ, ຜູ້ອຳນວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ໃນ 21 ໂຮງຮຽນເປົ້າໝາຍ.

# ຂໍ້ມູນລວງເລິກທີ່ກ່ຽວຂ້ອງກັບພື້ນທີ່ອົບອຸ່ນ ແລະ ປອດໄພ

## ຂໍ້ມູນລວງເລິກ 1



### ຄູສອນຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມໃນການນຳເອົາວິທີການຄຸ້ມຄອງຫ້ອງຮຽນເຊີງບວກ ແລະ ປອດໄພເຂົ້າມານຳໃຊ້.

ສປປ ລາວ ແມ່ນປະເທດໃນລຳດັບທີ 66 ຂອງໂລກ ແລະ ເປັນປະເທດທຳອິດໃນຂົງເຂດອາຊຽນທີ່ຮັບຮອງເອົາຄຳສັ່ງ ຫ້າມການລົງໂທດທາງຮ່າງກາຍ (ໃນເດືອນທັນວາ ປີ 2023) ເຂົ້າມານຳໃຊ້ ເຊິ່ງເປັນການປົກປ້ອງນັກຮຽນຈາກການລົງໂທດທີ່ນຳໃຊ້ຄວາມຮຸນແຮງທຸກຮູບແບບ.

ເຖິງຢ່າງໃດກໍ່ຕາມ, ການຄົ້ນຄວ້າໃນກໍລະນີສຶກສາໄດ້ຊີ້ໃຫ້ເຫັນວ່າ ການລົງໂທດທາງຮ່າງກາຍ ແລະ ການຮ້ອງໃສ່ນັກຮຽນ ແມ່ນຍັງຄົງເກີດຂຶ້ນຢູ່ໃນບາງສະຖານະການ, ເຊິ່ງສົ່ງຜົນກະທົບຕໍ່ຄວາມສຸກ ແລະ ຄວາມເປັນຢູ່ທີ່ດີຂອງນັກຮຽນຢູ່ໃນໂຮງຮຽນ.

ເພື່ອສົ່ງເສີມສະພາບແວດລ້ອມການຮຽນຮູ້ໃນທາງບວກນັ້ນ, ມັນມີຄວາມສຳຄັນຫຼາຍທີ່ຈະຕ້ອງເນັ້ນໜັກທາງດ້ານວິທີການສອນທີ່ໜ້າສົນໃຈ. ການສຶກສາຄັ້ງນີ້ໄດ້ພົບຕົວຢ່າງຂອງຄູສອນ ຜູ້ທີ່ສົ່ງເສີມພຶດຕິກຳໃນທາງບວກໂດຍການສ້າງຫ້ອງຮຽນທີ່ສະແດງອອກເຖິງການຊ່ວຍເຫຼືອ ແລະ ການເອົາໃຈໃສ່ເຊິ່ງກັນ ແລະ ກັນ. ວິທີການໃນການຄຸ້ມຄອງຫ້ອງຮຽນທີ່ມີປະສິດທິພາບນັ້ນປະກອບມີ: ການເຮັດໃຫ້ນັກຮຽນມີຄວາມກະຕືລືລົ້ນໃນລະຫວ່າງການຮຽນ ໂດຍຜ່ານກິດຈະກຳເປັນກຸ່ມ ແລະ ເປັນຄູ່ ພ້ອມທັງນຳໃຊ້ຄຳເວົ້າທີ່ສຸພາບ ແລະ ສຸຂຸມເພື່ອສິດສອນນັກຮຽນ.

ມີຫຼາຍໆກໍລະນີສຶກສາໄດ້ຍົກໃຫ້ເຫັນວ່າ ການຈັດກຸ່ມນັກຮຽນ "ດີ" ຫຼື ນັກຮຽນ "ຂີ້ດື້" ອາດສົ່ງຜົນເສຍຕໍ່ນັກຮຽນ ແລະ ຄວນຈະຫຼີກລ່ຽງ. ວິທີການສອນແມ່ນຈຳເປັນຈະຕ້ອງຊ່ວຍໃຫ້ນັກຮຽນມີສ່ວນຮ່ວມໃນການຮຽນຮູ້ໄດ້ຫຼາຍຂຶ້ນ, ເພື່ອທຳຄວາມເຂົ້າໃຈວ່າ ນັກຮຽນຮູ້ສຶກເບື່ອ ແລະ ຕ້ອງການກິດຈະກຳທີ່ທ້າທາຍກວ່າເກົ່າ ຫຼື ບໍ່ ຫຼື ສາມາດສັງເກດເບິ່ງວ່ານັກຮຽນເຂົ້າໃຈຄຳແນະນຳຂອງຄູແລ້ວ ຫຼື ບໍ່.

ເພາະສະນັ້ນ, ເພື່ອສ້າງຫ້ອງຮຽນທີ່ປອດໄພ ແລະ ສົ່ງເສີມການຮຽນຮ່ວມ, ຄູສອນຈຳເປັນຈະຕ້ອງໄດ້ຮັບການຝຶກອົບຮົມ ແລະ ຕ້ອງການຊັບພະຍາກອນ ເພື່ອໃຫ້ເຂົ້າໃຈວ່າ ການປະຕິບັດຂອງເຂົາເຈົ້າສົ່ງຜົນຕໍ່ຄວາມພ້ອມໃນການຮຽນຮູ້ຂອງນັກຮຽນແບບໃດ ແລະ ເພື່ອນຳເອົາແນວທາງທີ່ດີ ແລະ ມີປະສິດທິພາບເຂົ້າມານຳໃຊ້ໃນການຄຸ້ມຄອງພຶດຕິກຳ.

# ຂໍ້ມູນລວງເລິກ 2

## ປັດໄຈທັບຊ້ອນທີ່ສົ່ງຜົນຕໍ່ຄວາມໝັ້ນໃຈຂອງນັກຮຽນໃນການມີສ່ວນຮ່ວມໃນຫ້ອງຮຽນ ເຊິ່ງສົ່ງຜົນຕໍ່ຄວາມສາມາດໃນການຮຽນຮູ້ຂອງພວກເຂົາ.



ຄວາມໝັ້ນໃຈຂອງນັກຮຽນໃນການປະກອບສ່ວນໃນກິດຈະກຳຂອງຫ້ອງຮຽນແມ່ນມີຜົນມາຈາກຫຼາຍປັດໄຈ.

ໃນລະຫວ່າງການສຳພາດນັ້ນ, ຄູສອນ, ຜູ້ເຮັດວຽກສຶກສານິເທດພາຍໃນ ແລະ ຜູ້ປົກຄອງບາງຄົນ ບອກວ່າ ນັກຮຽນຈຳນວນໜຶ່ງແມ່ນ "ຂີ້ອາຍ" ຫຼື "ບໍ່ມັກເວົ້າ". ເຖິງແມ່ນວ່າ ຄຳສັບເຫຼົ່ານີ້ຈະກ່ຽວຂ້ອງກັບບຸກຄະລິກກໍຕາມ, ແຕ່ "ຄວາມຂີ້ອາຍ" ຂອງນັກຮຽນອາດຈະເຊື່ອມໂຍງກັບບັນດາປັດໄຈທັບຊ້ອນທີ່ເລິກເຊິ່ງກວ່ານັ້ນ. ພວກເຮົາໄດ້ຄົ້ນພົບບັນດາປັດໄຈເຫຼົ່ານີ້ໃນການສຶກສາຄົ້ນຄວ້າເຊິ່ງປະກອບມີ:

- ຄວາມເຂົ້າໃຈພາສາລາວທີ່ຈຳກັດຂອງນັກຮຽນ ເຊິ່ງເຮັດໃຫ້ພວກເຂົາມີສ່ວນຮ່ວມໄດ້ຍາກ.
- ບໍ່ໄດ້ຮັບການສຶກສາກ່ອນໄວຮຽນ ເຊິ່ງສົ່ງຜົນຕໍ່ການປັບຕົວເຂົ້າກັບສະພາບໃນຫ້ອງຮຽນ.
- ຄວາມທຸກຍາກຂອງຄອບຄົວ ເຮັດໃຫ້ນັກຮຽນບາງຄົນຮູ້ສຶກບໍ່ຢາກເວົ້າ, ອິດເມື່ອຍ ແລະ ຫິວເຂົ້າໃນຫ້ອງຮຽນ.
- ຄວາມບົກພ່ອງທາງດ້ານຮ່າງກາຍ ເຊິ່ງສົ່ງຜົນຕໍ່ຄວາມໝັ້ນໃຈໃນການປະກອບສ່ວນໃນຫ້ອງຮຽນ.

ເພາະສະນັ້ນ, ມັນເປັນສິ່ງສຳຄັນຫຼາຍທີ່ຈະຕ້ອງຮັບຮູ້ ແລະ ແກ້ໄຂບັນດາປັດໄຈທີ່ເປັນສິ່ງທ້າທາຍເຫຼົ່ານີ້ ເພື່ອສ້າງຫ້ອງຮຽນໃຫ້ເໝາະສົມສຳລັບການຮຽນຮ່ວມ ທີ່ນັກຮຽນທຸກຄົນຮູ້ສຶກໝັ້ນໃຈໃນການປະກອບສ່ວນ ແລະ ສາມາດຮຽນຮູ້ໄດ້ຢ່າງມີປະສິດທິພາບ.

# ຂໍ້ມູນລວງເລິກທີ່ກ່ຽວຂ້ອງກັບພື້ນທີ່ອົບອຸ່ນ ແລະ ປອດໄພ

## ຂໍ້ມູນລວງເລິກ 3

**ການສ້າງວັດທະນະທຳການຮຽນຮ່ວມທັງໃນ ແລະ ນອກໂຮງຮຽນ ແມ່ນຖືເປັນສິ່ງສຳຄັນສຳລັບນັກຮຽນທີ່ມີຄວາມບົກພ່ອງທາງດ້ານຮ່າງກາຍ.**



ຕົວຢ່າງໃນທາງບວກທີ່ພວກເຮົາສັງເກດເຫັນໄດ້ໃນລະຫວ່າງການສຶກສາສະແດງໃຫ້ເຫັນວ່າ: ຄູສອນ, ນັກຮຽນ, ຜູ້ອຳນວຍການໂຮງຮຽນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ສາມາດເຮັດວຽກຮ່ວມກັນໄດ້ ເພື່ອສ້າງສະພາບແວດລ້ອມທີ່ປອດໄພ ແລະ ໃຫ້ການສະໜັບສະໜູນນັກຮຽນຜູ້ທີ່ມີຄວາມບົກພ່ອງທາງດ້ານຮ່າງກາຍ. ວິທີການໃນການສະໜັບສະໜູນນັກຮຽນກຸ່ມນີ້ລວມມີ: ຄູສອນໃຫ້ການຊ່ວຍເຫຼືອແບບສະເພາະບຸກຄົນ, ໝູ່ເພື່ອນຮ່ວມຫ້ອງຮຽນດຽວກັນຊ່ວຍເຫຼືອຜູ້ທີ່ມີຄວາມບົກພ່ອງທາງດ້ານຮ່າງກາຍ, ພ້ອມກັນນັ້ນ ຄະນະພັດທະນາການສຶກສາຂັ້ນບ້ານ ກໍສາມາດສົ່ງເສີມການນຳໃຊ້ພາສາທີ່ສະແດງເຖິງຄວາມເຄົາລົບ ແລະ ໃຫ້ກຳລັງໃຈທັງຢູ່ໃນໂຮງຮຽນ ແລະ ພາຍໃນຊຸມຊົນ.

ເພື່ອໃຫ້ສາມາດສົ່ງເສີມນັກຮຽນຜູ້ທີ່ມີຄວາມບົກພ່ອງທາງດ້ານຮ່າງກາຍໄດ້ຢ່າງເຕັມສ່ວນນັ້ນ, ພວກເຮົາຈຳເປັນທີ່ຈະຕ້ອງຮັບຮູ້ເຖິງຄວາມຕ້ອງການສະເພາະຂອງພວກເຂົາ ແລະ ສະໜອງຊັບພະຍາກອນ ລວມທັງການຝຶກອົບຮົມທີ່ຈຳເປັນໃຫ້ແກ່ຄູສອນ ເພື່ອຮັບປະກັນວ່ານັກຮຽນຈະຮູ້ສຶກປອດໄພ, ສະບາຍໃຈ ແລະ ໄດ້ຮັບການຊ່ວຍເຫຼືອ ໃຫ້ພວກເຂົາສາມາດມີສ່ວນຮ່ວມໃນການຮຽນຮູ້ໄດ້ຢ່າງເຕັມທີ່.

# ຂໍ້ມູນລວງເລິກ 4

## ໂຄງລ່າງພື້ນຖານທີ່ເໝາະສົມແມ່ນມີຄວາມສຳຄັນສຳລັບຄວາມປອດໄພຂອງນັກຮຽນ.



ຜູ້ສັງເກດການໄດ້ລະບຸບັນຫາທີ່ພົບເຫັນຢູ່ເລື້ອຍໆ ເຊິ່ງເປັນບັນຫາກ່ຽວກັບ ນ້ຳໃນໂຮງຮຽນ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ, ຂີ້ເຫຍື້ອ ແລະ ໂຄງລ່າງພື້ນຖານໂດຍລວມທີ່ກໍ່ໃຫ້ເກີດຄວາມສ່ຽງຕໍ່ຄວາມປອດໄພຂອງນັກຮຽນ. ໂຮງຮຽນບາງບ່ອນມີສິ່ງອຳນວຍຄວາມສະດວກທີ່ຈຳກັດຫຼາຍ, ບໍ່ມີນ້ຳໃຊ້, ບໍ່ມີສະບູ, ອາຄານຫ້ອງນ້ຳບໍ່ປອດໄພ, ມີພື້ນທີ່ສູງຊັນ, ບ່ອນຫຼິ້ນນັກຮຽນບໍ່ມີຮົ້ວກັ້ນ ຫຼື ໃກ້ກັບທົນທາງທີ່ມີລົດແລ່ນໄປມາຕະຫຼອດ ແລະ ມີຂີ້ຝຸ່ນຫຼາຍໃນໄລຍະລະດູແລ້ງ. ບັນຫາເຫຼົ່ານີ້ສົ່ງຜົນກະທົບຕໍ່ຄວາມປອດໄພຂອງນັກຮຽນ, ການມາໂຮງຮຽນ ແລະ ສຸຂະພາບຂອງເຂົາເຈົ້າ.

ໃນບາງກໍລະນີ, ຊຸມຊົນ ຫຼື ອົງການຈັດຕັ້ງສາກົນໄດ້ປະກອບສ່ວນສະໜັບສະໜູນ ເພື່ອກໍ່ສ້າງພື້ນຖານໂຄງລ່າງໃຫ້ມີຄວາມປອດໄພຫຼາຍຂຶ້ນ ໂດຍການສ້າງຫ້ອງຮຽນ, ຮົ້ວ ຫຼື ຫ້ອງນ້ຳທີ່ມີຮາວຈັບສຳລັບນັກຮຽນທີ່ມີຄວາມບົກພ່ອງທາງດ້ານຮ່າງກາຍ. ຢ່າງໃດກໍ່ຕາມ, ເຖິງວ່າຈະມີໂຮງຮຽນຈຳນວນໜ້ອຍໜຶ່ງທີ່ມີພື້ນຖານເຫຼົ່ານີ້, ແຕ່ເສັ້ນທາງທີ່ເຂົ້າໄປເຖິງໂຮງຮຽນທີ່ປອດໄພ ແລະ ສາມາດເຂົ້າເຖິງໄດ້ງ່າຍດາຍແມ່ນຍັງຄົງເປັນສິ່ງທ້າທາຍຢູ່.

# ຂໍ້ມູນລອງເລິກທີ່ກ່ຽວຂ້ອງກັບຄວາມສາມັກຄີ

## ຂໍ້ມູນລອງເລິກ 5



### ມີໂອກາດ ເພື່ອດັດປັບແນວຄວາມຄິດເກົ່າແກ່ດັ້ງເດີມທາງດ້ານອັກຄະຕິທາງເພດ ທັງໃນ ແລະ ນອກຫ້ອງຮຽນ.

ກິດຈະກຳທີ່ຜູ້ໃຫ້ສຳພາດໄດ້ກ່າວເຖິງ ແລະ ເຫັນໄດ້ຈາກການສັງເກດຜ່ານມາໃນລະຫວ່າງໂມງພັກຮຽນ ມັກຈະເປັນກິດຈະກຳສົ່ງເສີມແນວຄິດດ້ານບົດບາດຍິງ-ຊາຍແບບດັ້ງເດີມ, ໂດຍທີ່ເດັກຊາຍມັກຈະຫຼິ້ນເຕະບານ ແລະ ໝາກບີ້, ສ່ວນເດັກຍິງມັກຈະຫຼິ້ນເຕັ້ນຢາງ.

ເມື່ອມີການສະແດງຮູບພາບປະກອບທີ່ມີເດັກຍິງເຕະບານ ໃນຫຼັກສູດສະບັບປັບປຸງໃໝ່, ນັກຮຽນບາງຄົນສົງໄສວ່າ ເດັກຍິງສາມາດເຕະບານໄດ້ ຫຼື ບໍ່. ເຖິງຢ່າງໃດກໍ່ຕາມ, ມີບາງຕົວຢ່າງທີ່ໄດ້ສັງເກດສະແດງໃຫ້ເຫັນວ່າ ເດັກຍິງກໍຫຼິ້ນເຕະບານກັບເດັກຊາຍ ແລະ ເດັກຊາຍກໍຫຼິ້ນເຕັ້ນຢາງກັບເດັກຍິງເຊັ່ນກັນ.

ຄູບາງທ່ານໄດ້ມີຄວາມພະຍາຍາມໃນການຈັດກຸ່ມປະສົມໃຫ້ມີເດັກຍິງ ແລະ ເດັກຊາຍ ໃນລະຫວ່າງການຮຽນໃນຫ້ອງ ແລະ ກິດຈະກຳນອກສະຖານທີ່ ເພື່ອສົ່ງເສີມການເຮັດວຽກເປັນກຸ່ມ, ການຮ່ວມມື ແລະ ການມີສ່ວນຮ່ວມ. ໃນສະຖານະການເຫຼົ່ານີ້, ເດັກຊາຍ ແລະ ເດັກຍິງໄດ້ແບ່ງປັນປຶ້ມແບບຮຽນ ພ້ອມທັງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງກິດຈະກຳການຮຽນ, ລວມທັງໃນລະຫວ່າງທີ່ຫຼິ້ນເກມກິດຈະກຳນອກຫ້ອງຮຽນຮ່ວມກັນ. ຜູ້ສັງເກດການສັງເກດເຫັນໄດ້ວ່າ ບາງເກມການຫຼິ້ນ, ເຊັ່ນ: ເກມປະເພນີ (ໝາກແຫຼະ ແລະ ກະຕໍ້) ແລະ ຟ້ອນ ແມ່ນສາມາດຫຼິ້ນຮ່ວມກັນໄດ້ທັງເດັກຍິງ ແລະ ເດັກຊາຍ.

ທັງຜູ້ຍິງ ແລະ ຜູ້ຊາຍ ທີ່ໄດ້ສຳພາດ ບໍ່ໄດ້ລະບຸໂດຍກົງວ່າເຄີຍປະສົບກັບບັນຫາຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການຈຳແນກເພດ. ເຖິງຢ່າງໃດກໍ່ຕາມ, ມີບາງຕົວຊີ້ວັດທີ່ເຮັດໃຫ້ຮູ້ວ່າຍັງມີຄວາມຄາດຫວັງທາງສັງຄົມທີ່ຜູ້ຍິງຕ້ອງເປັນຜູ້ດູແລລູກ. ພ້ອມນີ້, ຜູ້ອຳນວຍການໂຮງຮຽນ ແລະ ຄູທີ່ເປັນເພດຍິງຍັງໄດ້ກ່າວເຖິງຂໍ້ຈຳກັດທາງດ້ານຮ່າງກາຍ ບໍ່ວ່າຈະເປັນການກໍ່ສ້າງບ່ອນລ້າງມື ຫຼື ຂີ່ລົດຈັກໄປໂຮງຮຽນໃນໄລຍະລະດູຝົນນຳອີກ. ເນື່ອງຈາກສັດສ່ວນຂອງຜູ້ອຳນວຍການໂຮງຮຽນປະຖົມໃນເມືອງເປົ້າໝາຍທີ່ເປັນເພດຍິງ ມີພຽງແຕ່ 33%, ມັນຈຶ່ງຈຳເປັນຈະຕ້ອງໄດ້ສືບຕໍ່ຊຸກຍູ້ການມີສ່ວນຮ່ວມ, ການສ້າງຂີດຄວາມສາມາດ ແລະ ການເປັນຜູ້ນຳຂອງເພດຍິງ ເພື່ອໃຫ້ສາມາດເຂົ້າໃຈ ແລະ ຈັດການກັບບັນຫາຄວາມສະເໝີພາບຍິງ-ຊາຍໃນໂຮງຮຽນໄດ້.

# ຂໍ້ມູນລວງເລິກ 6

**ຜູ້ອຳນວຍການໂຮງຮຽນແມ່ນມີບົດບາດສຳຄັນໃນການສ້າງສະພາບແວດລ້ອມການຮຽນການສອນໃນທາງບວກ.**



ຜູ້ອຳນວຍການໂຮງຮຽນສາມາດສົ່ງຜົນສະທ້ອນຢ່າງຫຼວງຫຼາຍຕໍ່ກັບຈັນຍາບັນຂອງຄູສອນ, ການສະໜັບສະໜູນຈາກຜູ້ປົກຄອງ, ການຊ່ວຍເຫຼືອຈາກຊຸມຊົນ, ລວມເຖິງການເຂົ້າຮຽນ ແລະ ຜົນການຮຽນຂອງນັກຮຽນ, ບໍ່ວ່າຈະໃນທາງບວກ ຫຼື ທາງລົບ.

ໃນໂຮງຮຽນຈຳນວນໜຶ່ງ ມີຜູ້ອຳນວຍການໂຮງຮຽນທີ່ທຸ້ມເທເຮັດໜ້າທີ່ ໃນການສ້າງສະພາບແວດລ້ອມທີ່ມີຄວາມປອດໄພ ແລະ ມີຄວາມກົມກຽວກັນສຳລັບຄູ ແລະ ອຳນວຍຄວາມສະດວກຕໍ່ການຮຽນສຳລັບນັກຮຽນ. ເພື່ອທີ່ຈະເຮັດສິ່ງເຫຼົ່ານີ້ໄດ້, ຜູ້ອຳນວຍການໂຮງຮຽນຕ້ອງໄດ້ຂຶ້ນຫ້ອງສອນແທນຄູ ເພື່ອໃຫ້ຄູສາມາດເຂົ້າຮ່ວມກິດຈະກຳການພັດທະນາວິຊາຊີບຄູແບບຕໍ່ເນື່ອງ.

ນອກຈາກນີ້, ຜູ້ອຳນວຍການໂຮງຮຽນຍັງໄດ້ຊ່ວຍຊຸກຍູ້ສົ່ງເສີມ ຄວາມຮູ້ສຶກຜູກພັນ ລະຫວ່າງນັກຮຽນໂດຍຜ່ານການສະແດງທ່າທາງທີ່ສຳຜັດໄດ້ເຖິງຄວາມອົບອຸ່ນ ແລະ ເຂົ້າເຖິງໄດ້ງ່າຍ. ສິ່ງເຫຼົ່ານີ້ຍັງເປັນການຊ່ວຍເສີມສ້າງວັດທະນະທຳການຮຽນຮ່ວມໃນໂຮງຮຽນນຳອີກ.

# ຂໍ້ມູນລວງເລິກທີ່ກ່ຽວຂ້ອງກັບຄວາມສາມັກຄີ

## ຂໍ້ມູນລວງເລິກ 7

**ການສ້າງທີມງານຜູ້ເຮັດວຽກສຶກສານິເທດພາຍໃນແມ່ນເຮັດໃຫ້ຄູໄດ້ຮັບການຊ່ວຍເຫຼືອຫຼາຍຂຶ້ນ ແລະ ເຂົ້າເຖິງໄດ້ງ່າຍຂຶ້ນ.**



ໃນສົກຮຽນປີ 2023-2024, ຄູສອນ ແລະ ຜູ້ອໍານວຍການໂຮງຮຽນ ຈໍານວນ 1,043 ທ່ານ (ໃນນັ້ນ 54% ເປັນເພດຍິງ ແລະ 64% ເປັນຄົນຊົນເຜົ່າ) ທີ່ມາຈາກ 30 ເມືອງເປົ້າໝາຍໄດ້ຮັບໜ້າທີ່ເປັນຜູ້ເຮັດວຽກສຶກສານິເທດພາຍໃນ. ພາລະບົດບາດຂອງຜູ້ເຮັດວຽກສຶກສານິເທດພາຍໃນນີ້ ແມ່ນເປັນບົດບາດເສີມ ເພື່ອຊ່ວຍໃຫ້ຄໍາແນະນໍາດ້ານການສອນທີ່ເຄີຍປະຕິບັດໂດຍທີມງານຈາກຫ້ອງການສຶກສາທິການ ແລະ ກິລາເມືອງ ເຊິ່ງເປັນການເປີດໂອກາດໃຫ້ຄູສອນໄດ້ເຂົ້າເຖິງການພັດທະນາວິຊາຊີບຄູແບບຕໍ່ເນື່ອງໄດ້ຫຼາຍຂຶ້ນ.

ຂໍ້ມູນຈາກວິທະຍາໄລຄູ ໄດ້ສະແດງໃຫ້ເຫັນວ່າ 93% ຂອງຜູ້ເຮັດວຽກສຶກສານິເທດພາຍໃນ ໄດ້ໃຫ້ການຊ່ວຍເຫຼືອບັນດາຄູສອນທີ່ຢູ່ໃນແຜນຮັບຜິດຊອບຂອງເຂົາເຈົ້າຢ່າງໜ້ອຍທີ່ສຸດ 1 ຄັ້ງ ຕໍ່ເດືອນ. ການສໍາພາດຜູ້ເຂົ້າຮ່ວມໃນກໍລະນີສຶກສາແມ່ນເຮັດໃຫ້ພວກເຮົາເຫັນໄດ້ເຖິງ ຜູ້ເຮັດວຽກສຶກສານິເທດພາຍໃນທີ່ມີຄວາມຕັ້ງໃຈມຸ່ງໝັ້ນໃນວຽກງານ ແມ່ນເປັນຜູ້ທີ່ມັກຈະໃຫ້ຄໍາແນະນໍາດ້ານການຮຽນການສອນແກ່ຄູສອນຢ່າງເປັນປະຈໍາ. ຜູ້ເຮັດວຽກສຶກສານິເທດພາຍໃນບາງທ່ານຍັງໄດ້ສັງເກດເຫັນວ່າ ກົນລະຍຸດທີ່ຕົນເອງໄດ້ແນະນໍາໃຫ້ຄູສອນແມ່ນໄດ້ຮັບການຈັດຕັ້ງປະຕິບັດໃນຫ້ອງຮຽນ, ເຊິ່ງສິ່ງນີ້ສະແດງໃຫ້ເຫັນວ່າ ຄໍາແນະນໍາທີ່ເຂົາເຈົ້າໄດ້ໃຫ້ນັ້ນແມ່ນໄດ້ຖືກນໍາໃຊ້ໃຫ້ເປັນປະໂຫຍດໃນທັນທີ.

ເຖິງຢ່າງໃດກໍ່ຕາມ, ກໍຍັງຄົງມີສິ່ງທ້າທາຍຫຼົງເຫຼືອຢູ່. ຜູ້ເຮັດວຽກສຶກສານິເທດພາຍໃນຈໍານວນໜຶ່ງ ຍັງໄດ້ສະແດງອອກເຖິງ ຄວາມບໍ່ໝັ້ນໃຈໃນພາລະບົດບາດຂອງເຂົາເຈົ້າ, ໂດຍມັກຈະໃຫ້ເຫດຜົນວ່າ ວຽກຫຼາຍເກີນໄປ ຫຼື ຂາດຄວາມໝັ້ນໃຈກັບປະສົບການໃນການເຮັດວຽກຂອງຕົນ. ຄວາມກັງວົນເຫຼົ່ານີ້ສະແດງໃຫ້ເຫັນເຖິງ ຄວາມຕ້ອງການການຊ່ວຍເຫຼືອ ແລະ ການຝຶກອົບຮົມເພີ່ມເຕີມ ເພື່ອຮັບປະກັນວ່າ ຜູ້ເຮັດວຽກສຶກສານິເທດພາຍໃນທຸກຄົນຈະຮູ້ສຶກວ່າມີຄວາມພ້ອມ ແລະ ມີຄວາມເຂັ້ມແຂງ ເພື່ອຮັບຜິດຊອບຕໍ່ໜ້າທີ່ຂອງຕົນໄດ້ຢ່າງມີປະສິດທິພາບ.

# ຂໍ້ມູນລວງເລິກ 8

**ການສະໜັບສະໜູນຈາກຊຸມຊົນເປັນການປັບປຸງສະພາບແວດລ້ອມຂອງການຮຽນຮູ້ສໍາລັບນັກຮຽນ ແລະ ຄູສອນ.**



ການມີສ່ວນຮ່ວມຂອງຊຸມຊົນຜ່ານ ຄະນະພັດທະນາການສຶກສາຂັ້ນບ້ານ ໃນໂຮງຮຽນທີ່ເປັນກໍລະນີສຶກສາທັງໝົດ 21 ໂຮງຮຽນແມ່ນລ້ວນແລ້ວຕ່າງກໍມີຄວາມແຕກຕ່າງກັນ.

ໃນຂັ້ນພື້ນຖານ, ຄະນະພັດທະນາການສຶກສາຂັ້ນບ້ານ ເກືອບທຸກບ່ອນໄດ້ເນັ້ນໜັກເຖິງການຊຸກຍູ້ໃຫ້ຜູ້ປົກຄອງສົ່ງລູກຫຼານຂອງຕົນມາເຂົ້າໂຮງຮຽນ. ຄະນະພັດທະນາການສຶກສາຂັ້ນບ້ານ ບາງບ່ອນຍັງໄດ້ຈັດການພົບປະເປັນບາງໂອກາດ ເພື່ອປຶກສາຫາລືກ່ຽວກັບບັນຫາທີ່ສໍາຄັນເຊັ່ນ: ການມາໂຮງຮຽນຂອງນັກຮຽນ ແລະ ການບູລະນະໂຮງຮຽນ.

ຄະນະພັດທະນາການສຶກສາຂັ້ນບ້ານ ທີ່ມີຄວາມຫ້າວຫັນສູງ ໄດ້ມີການປະກອບສ່ວນທີ່ສໍາຄັນໃນການປັບປຸງສະພາບແວດລ້ອມຂອງໂຮງຮຽນ. ສິ່ງທີ່ເຂົາເຈົ້າເຮັດປະກອບມີ ການສະໜອງອາຫານທ່ຽງໃຫ້ນັກຮຽນ, ການສະໜອງອາຫານໃຫ້ຄູ, ການຊ່ວຍເຫຼືອດ້ານງົບປະມານ ຫຼື ແຮງງານເພື່ອປັບປຸງໂຄງລ່າງພື້ນຖານຂອງໂຮງຮຽນ, ການຊ່ວຍເງິນອຸດໜູນໃຫ້ແກ່ຄູ ແລະ ການຕິດຕາມການປະຕິບັດໜ້າທີ່ຂອງຄູເປັນປະຈໍາທຸກໆເດືອນ.

ນອກນີ້, ໄລຍະທາງຈາກໂຮງຮຽນໄປຫາບ້ານຂອງນັກຮຽນ ຈະສົ່ງຜົນຕໍ່ລະດັບການປະກອບສ່ວນຂອງຄະນະພັດທະນາການສຶກສາຂັ້ນບ້ານ ແລະ ຊຸມຊົນ. ການປະກອບສ່ວນທີ່ຕັ້ງໜ້າຈາກ ຄະນະພັດທະນາການສຶກສາຂັ້ນບ້ານ ຈະຊ່ວຍສ້າງບັນຍາກາດທີ່ເອື້ອອໍານວຍ ທີ່ເປັນປະໂຫຍດໃຫ້ແກ່ທັງນັກຮຽນ ແລະ ຄູສອນ, ທັງເປັນການສົ່ງເສີມປະສິບການດ້ານການສຶກສາຢ່າງຮອບດ້ານນໍາອີກ.

# ຂໍ້ມູນລວງເລິກທີ່ກ່ຽວຂ້ອງກັບການໃຫ້ຄວາມສຳຄັນ

## ຂໍ້ມູນລວງເລິກ 9

**ວິທີການສອນທີ່ຊຸກຍູ້ໃຫ້ນັກຮຽນຊ່ວຍເຫຼືອເພື່ອນຮ່ວມຫ້ອງຮຽນດຽວກັນ ແມ່ນເປັນການສົ່ງເສີມຄວາມໝັ້ນໃຈຂອງນັກຮຽນ ແລະ ເຮັດໃຫ້ການຮຽນຂອງເຂົາເຈົ້າດີຂຶ້ນ.**



ນັກສຶກສາຄົ້ນຄວ້າໄດ້ສັງເກດເຫັນວິທີການສອນທີ່ສົ່ງເສີມການປະກອບສ່ວນຂອງນັກຮຽນໃນບາງຫ້ອງຮຽນ. ວິທີການເຫຼົ່ານີ້ປະກອບມີ: ນັກຮຽນນັ່ງເຮັດວຽກຮ່ວມກັນເປັນກຸ່ມ, ການຈັດນັກຮຽນທີ່ມີຜົນການຮຽນດີ ແລະ ນັກຮຽນທີ່ມີຜົນການຮຽນຕ່ຳໃຫ້ເຮັດວຽກຮ່ວມກັນ - ລວມທັງນັກຮຽນທີ່ມີຄວາມພິການ. ນອກນີ້, ຍັງມີວິທີການທີ່ນັກຮຽນຊ່ວຍສອນບົດຮຽນໃຫ້ເພື່ອນຮ່ວມຫ້ອງດຽວກັນ, ຄູຊຸກຍູ້ໃຫ້ມີການຖາມຄຳຖາມ ແລະ ນັກຮຽນອ່ານປຶ້ມນິທານຮ່ວມກັນດ້ວຍຕົນເອງໃນລະຫວ່າງໂມງພັກຮຽນ.

ໃນທາງກົງກັນຂ້າມ, ນັກສຶກສາຄົ້ນຄວ້າຍັງສັງເກດເຫັນຄູສອນບາງຄົນແມ່ນເພິ່ງພາວິທີການສອນແບບດັ້ງເດີມ ທີ່ຖືເອົາຄູເປັນໃຈກາງ ເຊັ່ນວ່າ: ການອ່ານໃນປຶ້ມແບບຮຽນແບບຊ້ຳໆ, ການເຮັດວຽກຢູ່ໜ້າກະດານຫຼາຍເກີນໄປ, ນັກຮຽນກ່າຍບົດຮຽນໃສ່ປຶ້ມບັນທຶກ ແລະ ເມື່ອນັກຮຽນບາງຄົນເຮັດສຳເລັດແລ້ວ, ກໍຕ້ອງໄດ້ລໍຖ້າເປັນເວລາດົນຈົນກວ່ານັກຮຽນທຸກຄົນຈະກ່າຍບົດຮຽນໃຫ້ແລ້ວຄືກັນ.

ວິທີການເຫຼົ່ານີ້ແມ່ນບໍ່ຄ່ອຍມີປະສິດທິພາບ ໂດຍສະເພາະໃນຫ້ອງຄວບ ແລະ ໃນຫ້ອງຮຽນທີ່ມີນັກຮຽນຈຳນວນຫຼາຍ ເພາະມັນເປັນການຍາກສຳລັບຄູທີ່ຈະໃຫ້ການຊ່ວຍເຫຼືອນັກຮຽນແຕ່ລະຄົນໄດ້. ດ້ວຍເຫດນັ້ນ, ຄູສອນຈຶ່ງບໍ່ສາມາດໃຊ້ເວລາຂອງການຮຽນຮູ້ຂອງນັກຮຽນໄດ້ຢ່າງຄຸ້ມຄ່າ.

ເພາະສະນັ້ນແລ້ວ, ຄູສອນຈະໄດ້ຮັບໝາກຜົນຈາກການຊ່ວຍເຫຼືອໃນການນຳໃຊ້ວິທີການສອນທີ່ມີຄວາມຫຼາກຫຼາຍ ເພື່ອຕອບສະໜອງຕໍ່ຄວາມຕ້ອງການ ການຮຽນຮູ້ຂອງນັກຮຽນແຕ່ລະຄົນ ແລະ ເຮັດໃຫ້ນັກຮຽນໄດ້ປະກອບສ່ວນໃນຂະບວນການຮຽນຂອງເຂົາເຈົ້າເອງຫຼາຍຂຶ້ນ.

## ຂໍ້ມູນລວງເລິກ 10

**ຄູບາງຈຳນວນແຕ່ງບົດສອນ ເພື່ອໄວ້ເວລາຖືກກວດກາ ແຕ່ບໍ່ໄດ້ແຕ່ງບົດສອນ ເພື່ອໃຫ້ສາມາດຊ່ວຍເຫຼືອນັກຮຽນ ຕາມຄວາມຕ້ອງການທີ່ຈຳເປັນ ຂອງແຕ່ລະຄົນ.**



ຄູ່ມືຄູຂອງຫຼັກສູດສະບັບປັບປຸງໃໝ່ປະກອບມີຄຳແນະນຳໃນການສອນແບບລະອຽດ ເພື່ອຊ່ວຍໃຫ້ຄູໄດ້ນຳໃຊ້ວິທີການສອນທີ່ຖືເອົານັກຮຽນເປັນໃຈກາງ ແລະ ການຮຽນການສອນທີ່ເນັ້ນໃສ່ການປະຕິບັດຕົວຈິງ. ນອກນີ້, ຄູ່ມືຄູຍັງປະກອບມີຮ່າງບົດສອນທີ່ປັບໃຫ້ລຽບງ່າຍສຳລັບຄູ ເພື່ອໃຫ້ເຂົາເຈົ້າສາມາດບັນທຶກການປັບປ່ຽນທີ່ເຂົາເຈົ້າວາງແຜນໃນການຈັດຕັ້ງປະຕິບັດໃນບົດຮຽນແຕ່ລະບົດ ເພື່ອຕອບສະໜອງຄວາມຕ້ອງການການຮຽນຮູ້ຂອງນັກຮຽນແຕ່ລະຄົນ.

ຄູບາງທ່ານທີ່ໃຫ້ສຳພາດອະທິບາຍວ່າ ພວກເຂົາໄດ້ນຳໃຊ້ຄຳແນະນຳການສອນທີ່ມີໃນຄູ່ມືຄູ ເພື່ອຊ່ວຍເຂົາເຈົ້າໃນການກະກຽມບົດຮຽນ, ເຊິ່ງສອດຄ່ອງກັບຈຸດປະສົງທີ່ຕັ້ງໄວ້ໃນການສະໜອງການຊ່ວຍເຫຼືອທີ່ມີແບບແຜນ ເພື່ອໃຫ້ການສອນມີປະສິດທິພາບຍິ່ງຂຶ້ນ. 52% ຂອງຄູສອນໄດ້ລາຍງານວ່າ ການແຕ່ງບົດສອນຂອງຕົນເອງແມ່ນມີຈຸດປະສົງ ເພື່ອຕອບສະໜອງຕາມຂໍ້ກຳນົດທາງດ້ານການບໍລິຫານ (ຕົວຢ່າງ ການກະກຽມເອກະສານທີ່ຈຳເປັນ ເພື່ອການປະເມີນຜົນງານປະຈຳປີ).

ຄູບາງຄົນບອກວ່າ ພວກເຂົາໄດ້ຊອກຫາແຜນການສອນຈາກຄູຄົນອື່ນໆ, ໃນຂະນະທີ່ຄູບາງຄົນແມ່ນບໍ່ໄດ້ກະກຽມບົດສອນເລີຍ ດ້ວຍເຫດຜົນທີ່ວ່າ ບໍ່ມີເວລາຫວ່າງຫຼັງຈາກໂມງເລີກວຽກໃນການແຕ່ງບົດສອນ ເພາະພວກເຂົາຍັງມີພັນທະຮັບຜິດຊອບອັນອື່ນເຊັ່ນ: ການຊອກຫາອາຫານ ແລະ ການເບິ່ງແຍງຄອບຄົວຂອງເຂົາເຈົ້າ.

ສຳລັບຄູຜູ້ທີ່ໄດ້ກະກຽມບົດສອນນັ້ນ, ຂໍ້ມູນຈາກກໍລະນີສຶກສານີ້ ບໍ່ສາມາດເຫັນໄດ້ເຖິງຫຼັກຖານທີ່ຊັດເຈນກ່ຽວກັບຜົນກະທົບຂອງບົດສອນດັ່ງກ່າວທີ່ມີຕໍ່ການຮຽນການສອນ. ໃນທາງກົງກັນຂ້າມກັນ, ຄູສອນແມ່ນພົບສິ່ງທ້າທາຍໃນການສ້າງຄວາມສົມດູນລະຫວ່າງ ການແຕ່ງບົດສອນພາກບັງຄັບ ແລະ ການກະກຽມການສອນໃນຫ້ອງຮຽນຕົວຈິງ. ເພາະສະນັ້ນ, ການສຶກສາວິໄຈເພີ່ມເຕີມກ່ຽວກັບແນວທາງການແຕ່ງບົດສອນທີ່ມີປະສິດທິພາບນັ້ນ ຈະສາມາດຊ່ວຍໃນການດັດປັບນະໂຍບາຍໄດ້, ແລະ ຮັບປະກັນວ່າ ການແຕ່ງບົດສອນພາກບັງຄັບ ແລະ ຂອບເຂດຂອງການປະເມີນ ແມ່ນມີຄວາມສອດຄ່ອງກັບຫຼັກສູດສະບັບປັບປຸງໃໝ່ຫຼາຍຂຶ້ນ. ແນວທາງທີ່ປັບປຸງໃໝ່ນີ້ສາມາດພັດທະນາການແຕ່ງບົດສອນໃຫ້ມີປະສິດທິພາບຫຼາຍຂຶ້ນ ພ້ອມທັງຊ່ວຍໃຫ້ຄູສອນສາມາດເນັ້ນໃສ່ຄູ່ມືຄູ ແລະ ໃສ່ໃຈກັບຄວາມຕ້ອງການການຮຽນຮູ້ສະເພາະຂອງນັກຮຽນຂອງພວກເຂົາໄດ້.

# ຂໍ້ມູນລວງເລິກທີ່ກ່ຽວຂ້ອງກັບການໃຫ້ຄວາມສຳຄັນ

## ຂໍ້ມູນລວງເລິກ 11

**ການຊຸກຍູ້ ແລະ ກຳລັງໃຈຈາກຜູ້ອຳນວຍການໂຮງຮຽນ ແລະ ຄູຜູ້ອາວຸໂສ ສາມາດຊ່ວຍໃຫ້ຜູ້ເຮັດວຽກສຶກສານິເທດພາຍໃນມີຄວາມໝັ້ນໃຈຫຼາຍຂຶ້ນ.**



ການສຳພາດກັບຄູສອນ ແລະ ຜູ້ເຮັດວຽກສຶກສານິເທດພາຍໃນ ສະແດງໃຫ້ເຫັນວ່າ ຄູສອນມີຄວາມດີໃຈທີ່ໄດ້ຮັບການຊ່ວຍເຫຼືອດ້ານການສອນເພີ່ມເຕີມຈາກເພື່ອນຮ່ວມງານທີ່ເປັນຄູດ້ວຍກັນເອງ ຜູ້ທີ່ມີບົດບາດເປັນຜູ້ເຮັດວຽກສຶກສານິເທດພາຍໃນ.

ຜູ້ເຮັດວຽກສຶກສານິເທດພາຍໃນ ບາງທ່ານມີຄວາມຮູ້ສຶກວ່າ ພວກເຂົາຍັງອ່ອນປະສົບການທີ່ຈະໃຫ້ການຊ່ວຍເຫຼືອດ້ານການສອນ, ໂດຍສະເພາະການໃຫ້ຄຳແນະນຳແກ່ຜູ້ອຳນວຍການໂຮງຮຽນຜູ້ທີ່ຂຶ້ນຫ້ອງສອນ.

ເຖິງຢ່າງໃດກໍ່ຕາມ, ຜູ້ເຮັດວຽກສຶກສານິເທດພາຍໃນຜູ້ອື່ນໆ ຮູ້ສຶກວ່າຕົນເອງໄດ້ຮັບການຊ່ວຍເຫຼືອຈາກຜູ້ອຳນວຍການໂຮງຮຽນ ແລະ ສາມາດນຳໃຊ້ຂັ້ນຕອນ ແລະ ຄວາມຮູ້ຈາກການຝຶກອົບຮົມຜູ້ເຮັດວຽກສຶກສານິເທດພາຍໃນໄດ້, ພ້ອມທັງເຫັນເຖິງການປ່ຽນແປງໃນທາງບວກດ້ານວິທີການສອນ, ລວມທັງໃນບັນດາກຸ່ມຂອງຄູຜູ້ທີ່ອາວຸໂສພ້ອມ, ໃນຂະນະທີ່ພວກເຂົາກໍຄຳນຶງເຖິງຄວາມສຳຄັນຂອງການເຄົາລົບຜູ້ອາວຸໂສຕາມວັດທະນະທຳລາວເຊັ່ນກັນ.

ສະຫຼຸບແລ້ວ, ມັນຈະເປັນປະໂຫຍດຫຼາຍ ຖ້າຫາກພວກເຮົາພິຈາລະນາຫາວິທີສະໜັບສະໜູນຜູ້ເຮັດວຽກສຶກສານິເທດພາຍໃນ ຜູ້ທີ່ຍັງບໍ່ທັນມີຄວາມໝັ້ນໃຈເຕັມທີ່, ລວມເຖິງ ການຊ່ວຍຊອກຫາວິທີການທີ່ມີປະສິດທິພາບ ເພື່ອໃຫ້ຄູຜູ້ອາວຸໂສໄດ້ມີການປະກອບສ່ວນຮ່ວມກັນ.

## ຂໍ້ມູນລວງເລິກ 12

**ຜູ້ປົກຄອງມີຄວາມຄາດຫວັງທີ່ແທດເໝາະກັບຄວາມເປັນຈິງສໍາລັບການສຶກສາຂອງລູກຫຼານເຂົາເຈົ້າຫຼັງຈາກຮຽນຈົບຊັ້ນປະຖົມສຶກສາ ເຊິ່ງອີງຕາມໂອກາດດ້ານເສດຖະກິດ ແລະ ສັງຄົມຂອງພວກເຂົາ.**



ຜູ້ປົກຄອງຫຼາຍທ່ານໄດ້ບອກເລົ່າເຖິງ ຄວາມປາດຖະໜາເລັກໆນ້ອຍໆສໍາລັບອະນາຄົດຂອງລູກຫຼານຕົນເອງ.

ຜູ້ປົກຄອງບາງທ່ານຮູ້ສຶກວ່າ ການທີ່ເຂົາເຈົ້າບໍ່ສາມາດອ່ານໜັງສືໄດ້, ມີຄວາມຮູ້ພາສາລາວທີ່ຈໍາກັດ ແລະ ບໍ່ໄດ້ມີການສຶກສາຈາກລະບົບ ເຮັດໃຫ້ພວກເຂົາບໍ່ສາມາດຊ່ວຍລູກຫຼານໃນການຮຽນໄດ້.

ຂໍ້ຈໍາກັດດ້ານລາຍຮັບຂອງຄອບຄົວ ແລະ ຄວາມຫຍຸ້ງຍາກຈາກສະພາບເສດຖະກິດ ແມ່ນເປັນອຸປະສັກຕໍ່ການສືບຕໍ່ການຮຽນ ແລະ ການສຶກສາທີ່ຈະນໍາໄປສູ່ໂອກາດທີ່ຈະມີວຽກເຮັດງານທໍາທີ່ດີໃນອະນາຄົດ.

ນອກນີ້, ຜູ້ປົກຄອງຍັງໄດ້ບອກເຖິງສິ່ງທ້າທາຍທີ່ພົບເປັນປະຈໍາ ທີ່ກີດຂວາງເດັກຈາກການສືບຕໍ່ການຮຽນເຊັ່ນ: ໄລຍະການເດີນທາງທີ່ໄກ ເພື່ອໄປຮຽນທີ່ໂຮງຮຽນມັດທະຍົມ ແລະ ປັດໄຈດ້ານສັງຄົມ ເຊັ່ນ: ແຮງກົດດັນໃຫ້ແຕ່ງງານແຕ່ອາຍຸຍັງນ້ອຍ.

ເພາະສະນັ້ນ, ມັນຈະເປັນປະໂຫຍດຫຼາຍຖ້າຫາກພວກເຮົາຈະມີການສໍາຫຼວດກ່ຽວກັບວິທີການທີ່ຜູ້ປົກຄອງສາມາດຊ່ວຍເຫຼືອລູກຫຼານຂອງເຂົາເຈົ້າໃນການຮຽນໄດ້, ເຖິງແມ່ນວ່າ ພວກເຂົາບໍ່ໄດ້ເຂົ້າໂຮງຮຽນມາກ່ອນ ຫຼື ບໍ່ໝັ້ນໃຈໃນທັກສະດ້ານພາສາລາວຂອງຕົນກໍຕາມ.



**ຄວາມຮູ້ສຶກຜູກພັນ** ຂອງນັກຮຽນ
ການສ້າງຮາກຖານສໍາລັບການຮຽນຮູ້ໃຫ້ເຕີບໂຕ

**ພື້ນທີ່ອົບອຸ່ນ ແລະ ປອດໄພ**

**ຄວາມສາມັກຄີ**

**ການໃຫ້ຄວາມສໍາຄັນ**

ຖ້າຫາກທ່ານຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບ ການສຶກສາແບບຮຽນຮ່ວມ,
ກະລຸນາສະແກນລະຫັດ QR ດັ່ງຕໍ່ໄປນີ້

ແຜນງານບີຄວາ ແມ່ນແຜນງານທີ່ນໍາພາໂດຍ ກະຊວງສຶກສາທິການ ແລະ ກິລາ ແຫ່ງ ສປປ ລາວ,
ໂດຍການສະໜັບສະໜູນ ຈາກລັດຖະບານອົດສະຕຣາລີ

ຈັດພິມໃນເດືອນພຶດສະພາ ປີ 2025